Moi-même

ຣາຍການຣາຕຣີສະໂມສອນທີ່ພຣະບໍຣົມະຫາຣາຊວັງ
ໃນໂອກາດວັນສັງຂານຂຶ້ນ ຈ.ສ. ໑໓໒໗ ກົງກັບວັນທີ່ ໑໕ ເມສາ ໑໙໖໕

---

ໄຕ້ປະທີບບູຊາພຼະທາດຈອມສີ

---

ແຫ່ພຼະຍານາຄລົງຈາກພູສີ

---

ແຫ່ນາງຣາກສະເທວີ

---

ຟ້ອນທູນຖວາຍດອກໄມ້

---

ລຳໂຄມ

---

ຣາມາຍະນະ

---

ນາງແຕ້ວ

----

# P R O G R A M M E

# D E

# L A  S O I R E E  A U  P A L A I S

# R O Y A L

# L E  1ER  J O U R  D E  L' A N  1327

# ( 15 AVRIL 1965 )

-

Illumination du Phousi

-

La descente du Naga

-

Procession de Nang Raksadévi

-

Offrande de fleurs

-

Danse de Lanternes

-

Ramayana

-

Nang Kèo

-

# ຣ າ ມ າ ຍ ະ ນ ະ

—=xOx=—

## ຕ ອ ນ ພຼ ະ ຣ າ ມ ສ ະ ເ ດັ ຈ ຕ າ ມ ກ ວ າ ງ

—=xxx=—

### ທົສະກັນ ລັກ ນາງສີດາ

໑./- ເພງກາວໃນ : ທ້າວທົສະກັນ , ພຍາມາຣິສ , ອອກໜ້າສາກ -

ພາກ ທົສະກັນ

- ເມື່ອນັ້ນ ທົສະພັກທ້າວ ໄດ້ເຖິງຢັ້ງສາຄອນ
ພາຮມຸ່ງອົງງາມງອນ ຍອດພຼະນາງສີດານ້ຽ
ຈຶ່ງໃຫ້ຊຸມມານຜູ້ ເຣືອງສັກດາມາຣິສ
ນິມິດເປັນຣູບເນື້ອ ຕົວຜ້ຽງເກົ່າຄຳ ຫັ້ນແລ້ວ ໆ

ພາກ ມາຣິສ

- ທີ່ນັ້ນ ມາຣິສທ້າວ ທະລຶງເດດ ກໍອາສາ
ຕາມບັນຊາຈອມມານ ສັ່ງການເພື່ອເກົ້າ
ຈຶ່ງຍົກກອນວອນໄຫ້ວ ເຖິງຄຸນພຼະພຼົມເມດ
ອ່ານເວດແຜງເພດໄທ້ ເປັນເນື້ອຣູບຄຳ ໆ

໒./- ເພງຕຼະຈຳແລງ : ມາຣິສ ແປງຕົວ ຕໍ່ໜ້າທົສະກັນ

ພາກ ທົສະກັນ

- ພໍເມື່ອຂຸນມານທ້າວ ຕົນຣາພະນາສວນ
ເຫັນຮ່າງຈົງນຶກຄິເພື່ອນ ເທ່ງຄຳຄວນຍ້ອງ
ຈຶ່ງລ່ຳແຍງຍັງເນື້ອ ກວາງຄຳ ພິສວາດ
ປົງອາດຕັດສົ່ງໃຫ້ ເຣວຮ້ອນສູ່ອະສົນ ໆ

໓./- <u>ເພງຕ່ອງ.ພຣາເດີນ</u> : ທົສະກັນ ທາງຕົວ, ກວາງຄຳ ກັບ ນາງສີດາ ອອກໜ້າສາກ -
ກວາງ ທາງຕົວ,ພຼະຣາມ-ນາງສີດາ-ພຼະລັກ ອອກໜ້າສາກ -

<u>ພາກ ນາງສີດາ</u>

- ເມື່ອນັ້ນ ສີສະອາດນົງ ນາງນາດພຼະສີດາ
ມີພຼະອາຈາຂານ ຕໍບາຂຸ້ນກວາງ
ນາງກໍມີປຼະສົງໄດ້ ກວາງຄຳ ພິສວາດ ຈິງແລ້ວ
ພິສວົງຫຼົງຮັກເນື້ອ ປຼະສົງລ້ຽງລ່ຳແຍງ ໆ
- ຈຶ່ງໄດ້ວອນພຼະບາດທ້າວ ສິດທິເດດພຼະຣາມາ
ໃຫ້ໄຕ່ຕາມມິຄາໄພ ດັ່ງໃຈປຼະສົງນ້ອງ
ຂໍພຼະຈັບເອົາໄດ້ ທັງເປັນໄວ້ລ້ຽງລ່ຳ ປຼະຄອງຫ້ອມ
ແນ່ນອ່າຕາງ ຈັນນະຂັນຮູບເນື້ອ ຈຶ່ງປູ້ໄວ້ແອ່ນແຍງ ພຼະເຮືອງ ໆ

<u>ພາກ ພຼະຣາມ</u>

- ເມື່ອນັ້ນ ຣາມະຣາດທ້າວ ຕັດສົ່ງອະນຸຊາ
ໃຫ້ປຼະຄອງອົງພຼະສີດາ ທີ່ອະສົນຮັກສາເຈົ້າ
ກົວຈະມີໂພຍຕ້ອງ ໃນດົງໄພຍະມາດ
ພຼະຫາກເຫັນປຼະລາດລ້ຳ ທີ່ເຫັນເນື້ອປຽບຄຳ ໆ

໔./- <u>ເພງຂົມ , ເຊີດສົ່ງ - ລົວ</u> :
ພຼະຣາມສເດັດອອກຕາມກວາງ ຍິງກວາງ, ສຽງນາຣີຮ້ອງຫາພຼະຣັກ -

<u>ພາກ ນາງສີດາ</u>

- ເທື່ອນີ້ ສຽງປຼະລາດລ້ຳ
ຫຼອນວ່າ ອົງພຼະຣາມາ
ອະນຸຊາເຮີງ ເຈົ້າຈຶ່ງເຣວຜັນຜ້າງ
ຫຼອນວ່າ ມີເຫຕຸຣ້ອນ

ກ້ອງສຶ່ງສະເທືອນດົງ
ວ່າວອນເຖິງນ້ອງ
ສເດັຈຕາມພຼະເຈົ້າພີ່ ທ່ຽວເທີ້ນ
ຕາມຕ້ອງຣອດພຼະອົງ ບໍ່ຮູ້ ໆ

<u>ພາກ ພຼະຣັກ</u>

- ຂ້າຂໍມີບນອບນ້ອ
ອັນນີ້ ຣ້ຽງທີ່ເປັນອຸບາຽມານ
ກົວຈະມີລາງຣ້າງ
ຂ້າບໍ່ສາມາດກ້າ

ທູນອາດເສົາອະນີ ພີ່ເຮີງ
ຫຼອກລວງໃຫ້ຫຼົງເພີ້
ໂຣມເຖິງສະໄພ້ພີ່ ພາງພີ້
ຈື່ໄລເຈົ້າ ພຼະພີ່ຍິງ ດອກນາ ໆ

<u>ພາກ ນາງສີດາ</u>

- ເມື່ອນັ້ນ ສີສະອາດນ້ຽງ
ຂໍໃຫ້ ອະນຸຊາຕາມ
ແສນອຸຣາຣົມຣ້ອນ
ຣຳພັນເຖິງພຼະບາດເຈົ້າ

ໄດ້ຣິ່ຣຳ ພຼະວາຈາ
ໄຕ່ທາງພຼະອົງເຈົ້າ
ຣົມພຼະກາຽເຊັນຊຸ່ນ
ທັງໄຫ້ຣ່ຳໄຮ ໆ

<u>ພາກ ພຼະຣັກ</u>

- ເມື່ອນັ້ນ **ອະນຸຊ້ອງ**
ສົງສານອົງພຼະສີດາ
ຈຶ່ງໄດ້ວອນເຖິງໄທ
ພຼະກໍລີລາດຜ້າງ

ເຫັນແຫ່ງພຼະອາການ
ອະນາດໃຈ ຈິງເຫ້
ພຼະເທວາ ໃຫ້ຫຼິງລ່ຳພຼະນາງແລ້ວ
ເຖິງເຈົ້າ ພີ່ພຼະຣາມ ໆ

໕./- <u>ເພງເທາະ</u> : ພຼະຣັກ ອອກຕາມພຼະຣາມ, ພຼະຣຶສີແປງ ມາເຖິງນາງສີດາ -

<u>ພາກ ຣຶສີ</u>

- ເມື່ອນັ້ນ ຣູບເຜົ່າເຊື້ອ　　ຈິງເພດພຼະຣືສີ
ໃນຄີຣີດງດົງ　　ດຸ່ງມາເຖິງນ້ຍ
ຈິ່ງກ່າວຈາແຖລງຖ້ຍ　　ຖາມນາງຄວາມນ່ອນ
ສ່ອນວ່າ ນາງນາດນ້ຍ　　ເປັນຜູ້ເຜົ່າໃດ ນີ້ເດ ? ໆ
- ຫຼືວ່າ ນາດຖະນ້ຍ　　ເປັນໜໍ່ລັກສະໝີ
ນະເຫສີອົງພຼະນາຣາຍ　　ຣູບງາມສະເນີແໜ້ນ
ຫຼືວ່າ ເປັນພົງເຊື້ອ　　ອັບສອນນາງກັນລະເຍດ
ແຫ່ງເຜົ່າເທເວດຟ້າ　　ລົງຫຼິ້ນໂລກຄົນ ນັ້ນລື ? ໆ

## ພາກ ນາງສີດາ

- ເມື່ອນັ້ນ ໂສມສະອາດນ້ຍ　　ນາງນາດພຼະສີດາ
ມີພຼະວາຈາຂານ　　ຕົ່ນມຸນີເຈົ້າ
ຂ້າແຕ່ ຕົນບຸນກວ້າງ　　ພຼິດທາຈານຈອມນັກປຼາດ
ຂ້ານີ້ ຄຍຖ້າພຼະບາດເຈົ້າ　　ຜົວເຜົ້າທີ່ຄວາໄຟ ໆ
- ຫາກເມ່ນຕົນອາດຫ້າວ　　ສິດທິເດດຣາມາ
ທັງພຼະຣັກອະນຸຊານາແຣມໄພ　　ແຫ່ງອະສົມພາຍພີ້
ບັດນີ້ ພຼະກໍເດີນດົງຜ້າຍ　　ປຼະສົງກວາງແລະພູເຖື່ອນ
ເນື້ອເຖື່ອນໄພຍະນາດກວ້າງ　　ພົ້ນຍຈັກຕ່າວມາ ພຼະເຣີຍ ໆ
- ຂໍພຼະເຍື້ອນໂຜດຂ້າ　　ເຂົ້າພັກຜ່ອນພຼະກາຍາ ກ່ອນທ້ອນ
ໃນສາລາອາສົມ　　ຊ່ວຍພຼະປາທາເຈົ້າ
ມີທັງຜົນຜລາໄມ້　　ສຸກຫວານແອມແຊບ
ຂ້າຂໍຖວາຍເພບຣັກ　　ມຸນີເຈົ້າ ຈົ່ງຄຍສັນ ແດ່ທ້ອນ ໆ

ຜ./- ເພງລົງສົງ : ນາງສີດາ ເອົາໂອຕັກນ້ຳລາງເທົ້າຣືສີ -

## ພາກ ຣືສີແປງ

## ພາກ ສະດາຍຸ

- ເມື່ອນັ້ນ ສະກຸນະຊາດເຊື້ອ    ເຫັນແທ່ງຣຽຣະທັດ
ຊຸມນານນຳນາງເມືອງ    ຈາກພຼະອາວະຕານເຈົ້າ
ຈິ່ງກ່າວຄຳຄວນຫ້າມ    ຊຸມນານທີນະຊາດ
ນຶງນີ້ ຍັງອາດລັກລອບນ້ອງ    ໃຫ້ຣົ້ນຮ້ອນຮອດອິນ ເທັ້ນໍ ໆ
- ອັນທີ່ມາດຖະນ້ອງ    ທີ່ເປັນມິ່ງມະເຫສີ
ອົງຈັກກຼີຣາມາ    ໂລກໄຕຼກໍຢຳຢ້ານ
ຄວນທີ່ນຳຄືນໃຫ້    ພຼະນາຖາ ຢ່າຊ້າຢູ່ ນານເຮີຍ
ກົວວ່າເວັ້ນບໍ່ນອ    ຈະສູນສ້ຽງຊາດນານ ແທ້ນາ ໆ

## ພາກ ທົສະກັນ

- ເມື່ອນັ້ນ ທົສະພັກທ້າວ    ຟັງເພດສະກຸນຫຼວງ
ເຈັບແສບໃນທວງເພືອນ    ໝື່ນຫຼາວແຫຼນຮອງ
ຈິ່ງໂກດເຄືອງຄຳຮອນ    ດອນສະກຸນປຼະລອງເດດ
ປັ້ງຢ່າວເສນາດ້ລອມ    ໂຮມສູ້ຕໍ່ປັກຂີ ໆ

## ພາກ ສະດາຍຸ

- ປັກຂີເປື້ອງປີກປ້ອງ    ຊີ່ງອອນພຼະສີດາ
ຊຸມນານຄວາພຼະນາງຫຼົບ    ແກ່ວງຕະບອງປຼະຄອງນ້ອງ
ສຸດທີ່ເດຊາທ້າວ    ທັງສອງປຼະລອງເດດ ກັນນັ້ນ
ບໍ່ໄດ້ສົມເພດຟື້ນ    ປຼະລົງທ້າວຝ່າຍໃດ ໆ

ໝ./- <u>ປະຄົມ ເຊີດຣົບ</u> ແລ້ວຢຸດປອງຟ້າ -

## ພາກ ສະດາຍຸ

- ນົກຈີ້ງອອກປາກຕ້ານ    ຈາຕໍ່ຊຸມນານ
ກູບໍ່ມີເກງຂາມ    ຄອບມືມັ້ນທ້າວ
ກົວແຕ່ທັນນະໂຮງເຈົ້າ    ຈອມທັມຣາມະຣາດ
ອັນສີດາມາດນ້ອງ    ສວມກ້ອງກ່ອນທັດຖາ ດອກເດ ໆ

<u>ພາກ ທົສະກັນ</u>

- ເມື່ອນັ້ນ ລືເດດທ້າວ ຕົນຣາບພະນາສອນ
ແຍງລ່ຳນອນພຼະສີດາ ຄູ່ທັດຖາຂວາຊ້າຍ
ນັນກໍບາງເອົາໄດ້ ທັມມະໂຣງເລີ່ຍຂວາງ
ປີກປັກຂີຫາມຸ່ນນ້າງ ສະແຄງເຈີ້ຍເຈີດລົງ ໆ

໑໐./- <u>ລົວໂອດ</u> : ທົສະກັນຣົບສະດາຍຸ ສະດາຍຸປີກຫັກຕົກລົງ ນາງສີດາສັ່ງກາບທູນພຼະຣາມ -

<u>ພາກ ນາງສີດາ</u>

- ເມື່ອນັ້ນ ນາງນາດນ້ອງ ເທັນແຫ່ງໄພຣີ
ອັນປັກຂີໂຣງແຮງ ທ້າວຕົນເຕັງຟື້ນ
ອັບປະຣາໄຊໃຫ້ ຊຸມມານຕົວຖ່ອຍ ສັນນັ້ນ
ພຼະໄທເຍບແຕກນ້າງ ແສນຊຸ້ນເວທະນາ ໆ
- ນາງຈຶ່ງອອກໂອດຕ້ານ ຣ້ອງສັ່ງສະກຸນໄພ
ວອນໃຫ້ນຳອາການ ກາບທູນພຼະຣາມເຈົ້າ
ເທື່ອນີ້ ຊຸມມານຮ້າງ ພະນາສອນທິນະຊາດ
ນຳເອົານາດຖະນ້ອງ ທີ່ພົ້ນ ພາກພຼະອົງ ອ່າເນີ ໆ

<u>ພາກ ນົກສະດາຍຸ</u>

- ເມື່ອນັ້ນ ສະກຸນະຊາດເຊື້ອ ຟັງທີ່ພຼະວາຈາ
ໃຫ້ອາຣົມຈິນດາ ຄັ່ງຫວງທັງສະອື້ນ
ເພາະບໍ່ທົນທານສູ້ ຊີໄຊຣິດທິເດດ ນານນັ້ນ
ປີກເຫຼົາຫັກຂາດບັ້ນ ລົງພື້ນແຜ່ນສຸທາ ໆ

<u>ພາກ ນາງສີດາ</u>

- ໂອນໍ ກົນເພງເດ ຂ້ອຍເຮີຍ ທຸກຄອບເພື່ອຕົວນານ ແທ້ນໍ
ທຸກເພື່ອພານຕ່ຳຊ້າ ທຸກຄອບບ້າ ບໍ່ຫາທ່ອນສິນທັນ ແທ້ນໍ
- ນາງກໍປົດປ່ອຍເປື້ອງ ຍັງເຄື່ອງປະດັບກາຍ
ທັງກຳໄຣພຼະພູສາ ໃຫ້ຫຼ່ອນລົງເພື່ອພື້ນ

ຫວັງເພື່ອເທພາຜູ້ ຮັກສາດົງແດນປ່າ
ເກັບຮັກສາເພື່ອທາວ ພະຣາມຜູ້ເຜົ້າຕົວ ໆ

- ໂອນໍ ແສນວິບາກໂຮມເທິງ ເຫັ້ນໍ ນາພົບຍັງຄາວເຂັນເດືອດຮ້ອນ
ທຸກເຄິ້ງຂອງຕົວຮຽມ ເຫັ້ນໍ ໆ
- ຂໍເທົ່າເທເວດຟ້າ ເຫັນແຫ່ງຮອງຮະທັດ ແດ່ທ້ອນ
ນາງກໍາຈັດຈອນນານ ສິ້ງອະທັມ ໃຫ້ສູນສ້ຽງ
ສັນໃດນໍ ຈຶ່ງຈະໄດ້ພົບເຈົ້າ ພະຣາມາຜົວນິ້ງ ຮຽມເດ !
ແສນທຸກວິໂຍກທ້າວ ໃຫ້ຄືນຮ້ອນ ຄອບນານ ເຫັ້ນໍ ໆ
- ໂອນໍ ລືເທດທ້າວຈອມທັ້ນຂອງເຮິງ ຂໍພະເຣວພະລັມເຮັ່ງຮ້ອນ
ຕາມໄຕ້ຕອນຫາຮຽມ ນີ້ນາ ໆ
- ອັນທີ່ສຽງແຜດກ້ອງ ດົງດ່ານພະຄີຣີ ທີ່ພູ້ມ
ສີດາຮໍາພັນເຖິງ ເຜົ້າພະຣາມຜົວແກ້ວ
ກໍຫາກເຫິງທາງສິ້ນ ແສນພົງ ໄພຍະນາດ
ໂອກາດຍາວກ້ວາງ ພັ້ນຂຸ່ນຂອບພະນອມ ຫັ້ນແລ້ວ ໆໆ

໑໑/- <u>ເພງໂອ້ - ໂອດ - ເອີດ</u> • ທົສະກັນ ອູ້ມເອົານາງສີດາເຫາະໄປສູ່ລົງກາ -

```
xxxxxxxx

xxxxxxxx   x x     x
       x    x      x
    xx x    x      x
       x    x      x
       x    x x x x
```

# ເ ຣື້ ອ ງ ພ ະ ລັ ກ ພ ະ ລ າ ມ
## (ບົ້ນໃຫ້ເສນາຕາມຫານາງສີດາ)

<u>ເພງເຊີດ</u> :

- ບົດຂອງພະລາມມີຄວາມເສົ້າໂສກດ້ວງຄວາມພັດພາກຈາກນາງສີດາ (ທ່າໂສກ) -

ເມື່ອນັ້ນ ພູະບາທທ້າວ　　ຣາມະຣາຊລືາງມ<br>
ຊິງທົ່ອນວງນພູະໄທຄິດ　　ຄັ່ງຫວງທັງສະອື້ນ<br>
ພູະກໍໂສກາກັ້ນ　　ກາງໄພທິມະເຫວດ<br>
ຄິດເຖິງກັນລະເຍດນ້ອຍ　　ສີດານ້ອງນຶ່ງຂ້ວນ .<br>
ຄວາມເນື່ອອະນຸ້ມອງ　　ປູະຄອງແຫ່ງກັນລະຍາ ຢູ່ນັ້ນ<br>
ສີດາມາຂັບພີ　　ໃຫ້ທ່າງຄິງຄາມນ້ອຍ<br>
ຈຶ່ງໄດ້ເສັຍໄຊໃຫ້　　ຊຸມມານຕົວຖ່ອຍ<br>
ພອຍໃຫ້ຈິຕພື້ທຸກໂສກເສົ້າ　　ດອນເຈົ້າບໍ່ເຫຶອດຫາຍ ເພ້ເດ .<br>
ແສນນິກແສນຄັ່ງແຄ້ນ　　ແສນອນາດນາງຄານ<br>
ທັງໂກດເຄືອງຊຸມມານ　　ທີ່ແຕ່ງກົນມາລໍ້<br>
ເປັນທີ່ອັບອາງແທ　　ເທວາພູະພົມເມດ<br>
ດ້ວຍເຫຕຸອັປະໂຍຊເທ້　　ທັງຄ້າຍຊີ່ຣ່າຫວນ ແລະນໍ ໆ

- ເພງໂອ້ ສຸດແລ້ວຕໍ່ໃສ່ ເພງຂຶນ ໃນຄວາມໂສກຂອງພະລາມ ແລະ ເສນາ ທັງສາມເຂົ້າເຝົ້າ -

- ບົດຂອງເສນາ ພາກທູນຖວາຍເຫຕຸການຕໍ່ພະລາມ ຊຶ່ງບໍ່ໄດ້ພົບນາງສີດາ -

ທີ່ນັ້ນ ເສເນດທ້າວ　　ຫງວໄຕ່ຕາມພູະນາງ<br>
ສຸດທີ່ທາງໂຄຈອນ　　ດ່ານພນາໄກລໍ້<br>
ບໍ່ອາຈຫວນເຫັນຫ້ອງ　　ຊຸມມານທິມະຊາຕ<br>
ກັບທັງນາງນາຖນ້ອຍ　　ເທວີເຈົ້າເນ່ເມືອງ<br>
ຈຶ່ງໄດ້ເຂົ້າຂາບໄຫ້ວ　　ນົບພູະບາທບັງຄົມ<br>
ຂໍເຜົ່າເໜືອຫົວພູະ　　ໂຜດຜາຍຝັ້ງຂາ<br>
ມາບໍ່ເຫັນສັງເທ້　　ທາງຫງວທີ່ດັ້ນຄວ່າ<br>
ກາງພນາເຖື່ອນໄມ້　　ໃນຫ້ອງແຫ່ງໃດ ພູະເຣີງ ໆ

. . . . . . . . . . . . . . . . . . . .

- ບົດຂອງ ພຼະລາມ ຕໍ່ :

| | |
|---|---|
| ເມື່ອນັ້ນ ສຸຣິວົງທ້າວ | ຣາມະຣາຊກຼະສັດຕາ |
| ມີພຼະວາຈາຕຼັສ | ຕໍ່ເສນາທ້າວ |
| ເຮົາຈະຄອຍຟັງເບື້ອງ | ກະບີສີສລອງອາຈ |
| ຄົງຈັກສາມາຖ້ຼ | ເຫັນແຈ້ງດັ່ງປຼະສົງ ທ່ານເຮີຽ , |
| ທ່ານຈົ່ງເຂົ້າພັກຍັງ | ແຍງທີ່ໂຮງຫອງ ກ່ອນເທີ້ນ |
| ປຼະຄອງປວງເສນາ | ໃຫ້ສຳຣານທັງຄ້າຍ |
| ອັນທີ່ສົມໃດນັ້ນ | ກະບີສີຊີໄດ້ລາວ |
| ເຂົາຈັກກັບຕ່າວປີ້ນ | ມາເທົ້ບມານ . |

- ເພງກາວນອກ : ພຼະລາມແລະເສນາທີ່ເຂົ້າເຝົ້ານັ້ນ ໄດ້ຈາກທີ່ແລະຫາຍຕົວໄປ ທະນຸມານ ເຂົ້າມາແທນທີ່ -

- ບົດຂອງທະນຸມານພາກເວລາຢຸດເພງກາວນອກ ( ຈາກໜ້າຕົ້ນ ) -

| | |
|---|---|
| ແຕ່ນັ້ນ ສິທທິເດຊທ້າວ | ຈອມແຫ່ງວານອນ |
| ນຳພູ່ສັນຈອນເດີນ | ດ່ານພົງໄພເສື້ອ |
| ແສນທຸກຂ໌ທາງຍາວເຍື້ອນ | ສຸດກຳລັງທີ່ດັ້ນດຸ່ງ |
| ທຸກມື້ອາຮຸ່ງຄ່ຳເຊົ້າ | ອາຫາຣຄ້ຽວກໍ່ຂາດເຂີນ . |
| ແຕ່ຫາກຍັງຄ່ອຍໄດ້ | ສະຕິຫ່ຽງທາງປຼະສົງ |
| ຈົ່ງຜ່ານແດນໄພພົງ | ເຜົາພານຊຸມເສື້ອ |
| ອັນທີ່ມາໆເນື້ອ | ພນາສົມແສນຊ່ຳ |
| ພາໝູ່ເຂົ້າລ່ວງລ້ຳ | ພົ້ນພື້ນຜ່ານພີໄຊຍ໌ , |
| ພໍມາເຖິງຖິ່ນກ້ວາງ | ແຄມຝັ່ງສມຸທຫຼວງ |
| ຝູ່ງໝູ່ນອນວານອນ | ອ່ອນແຮງທິວກັ້ນ |
| ທຸກເຫຼົ່າເອົາຕົນລົ້ມ | ເລືອດິນດອນຫາດ |
| ຂາດສະຕິຕື່ນເຕັ້ນ | ຕາມເຈົ້າພຼະແມ່ເມືອງ ທັ້ນແລ ໆ |

........................

- ເພງແພະ ຣຸ້ງສັນພາທີມາເວີ່ນຢູ່ແຕ່ໄກ ຕົວຫະນຸມານຢືນທຳທ່າ ແລະ ເຫຼືອດຫຼຽວເບິ່ງ ຕົ້ວຣຸງສເນີ -

- ບົດຂອງຣຸ້ງສັມພາທີ ເວລາຢຸດເພງເສບັ້ນ :

| | |
|---|---|
| ແຕ້ມປັກສະຊາຕເຊື້ອ | ນາມຊື້ສັມພາທີ |
| ຜົມຕ່ານປອນເມຄີ | ເວີ່ນວຽນນິພ້າກວາງ |
| ເຫັນພູ່ວານອນລົ້ມ | ເລືອດີນເດັ່ງຣະດາດ |
| ຮ້ອງຈວາດວານະເຣດຫ້າວ | ຢືນສ້ານໄຜ່ຟັງ |
| ກູຈັກກິນລີ້ງນ້ອຍ | ທີ່ຕາຍຕາກເໜືອດອນ ກ່ອນເຫີ້ນ |
| ເປັນເຍື່ອຫອມອາຫາຣ | ໂຊກດີວັນນີ້ |
| ແຕ່ຫາກກາຍາເນື້ອ | ຜິວຜາງຜອນຈ່ອຍ ກະດັດມໍ່ |
| ອັນທີ່ເລືອດແລະເນື້ອ | ພໍ້ນອຍກໍບໍ່ມີ . |
| ກູຈັກຂົບຄາບຄ້ຽວ | ກິນແຕ່ມັນສມອງ |
| ທັງໃນຕາຂອງເຂົາ | ໃຫ້ອື່ມເຕັມຄາວນີ້ |
| ອັນທີ່ວານອນນ້ອຍ | ໂຣຍແຮງອິດອ່ອນ |
| ເຂົາກໍນອນເນັ່ງເນື້ອ | ທິ້ວຫ່ອງສເນ່ງຕາງ ຫັ້ນແລ້ວ . |

- ເພງເຊີດສິ້ງ ຣຸ້ງສັມພາທີເວີ່ນລົງມາໃກ້ຫະນຸມານ ແລ້ວຢຸດເພງ ພາກຫະນຸມານ -

- ບົດ ຂອງຫະນຸມານ ເວລາສັມພາທີຢຸດຟັງຢູ່ :

| | |
|---|---|
| ແຕ້ມ ວາງບຸຕຫ້າວ | ສິທທິເດຊກະບີສີ |
| ຮ້ອງປ່າວເປັນພາທີ | ເຜົ່າພູ່ວານອນນ້ອຍ |
| ເຮົາຈັກດັບວາງສີ້ນ | ສູນຊີວາຊ້ຳຊົ່ວ ລະຕີມໍ |
| ກົວ່າເຮົາຈັກເປັນເຍື່ອທ້ອງ | ນັ້ນເຫ້ແຫ່ງປັກຂີ . |
| ອັນນຶ່ງ ນ້ອງຝັ່ງນ້ຳ | ສມຸຫໃຫ່ງເຫຼືອຕາ |
| ບໍ່ອາຈພາກັນຈອນ | ຕໍ່ຫາງຫຽວດົ້ມ |
| ອັນນີ້ຮອຍວ່າຂົ້ນະຣາຊເຈົ້າ | ເຫັນຄວາມຊ້າຊົ່ວ ເຮົານັ້ນ |
| ກົວ່າເພີ່ນນັ້ນຕັ້ງແຕ່ງໃຫ້ | ນາມຮ້າງຮອດເຮົາ ບໍ່ຮູ້ |

.......................

ນັບແຕ່ປັກສະຊາຕເຊື້ອ　　ຊະດາຍຸຣາຊ ສກຸນຫຼວງ
ຍັງຍ່ອມສູນຊີວາ　　ເພື່ອເຍນຕົວຣ້າຽ
ອັນທີ່ສົບສຽມທ້າວ　　ຊີງໄຊໄພຍະມາດ
ດ້ວຽເຫຕຸມາຖ້ມອຍ　　ສີດາເຈົ້າພຼະເມ່ເມືອງ ທ່ານເຣີຽ ໆ

- ບົດຂອງ ສັມພາທີ ຕໍ່ຈາກບົດຂອງ ຫະນຸມານ :

ແຕ່ນັ້ນ ສັມພາທີປັກຂະຣາຊທ້າວ　　ສດັບທີ່ຄຳແຖລງ
ແຄງຄິດຄນຶງພາດາ　　ຄີ່ງໃຄ່ຖາມເຖິງຖ້ອຍ
ເຣັວທ່ອມຕົວລົງໃກ້　　ກະບີສີຖາມທີ່
ຊະດາຍຸປັກສີ ຣື ນອດນ້ຽມ　　ນິ້ເຫທີ່ໃດ ນັ້ນເດ

- ບົດຂອງ ຫະນຸມານ ຕໍ່ :

ແຕ່ນັ້ນ ວານະເຣດສູ້　　ຮູ້ທ່ອມຣອຍຣະທັດ
ນຳປຼະວັຕໄຂຂານ　　ສູ່ຟັງຕຼິງຖ້ອນ
ອັນທີ່ມາຣຕົວຣ້າຍ　　ນຳສີດາເຈັຍຣພາກ ໄປນັ້ນ
ໄດ້ພົບຊະດາຍຸຣາຊທ້າວ　　ຣາວທ້ອງຖິ່ນພນາ .
ນິກັ້ນ ຫ້ວງຊ່ວຍເປື້ອງ　　ປິດແຫ່ງກັນລະຍາ
ນຳເທີດທູນພະສວາມີ　　ໃຫ້ສຳຣານພຼະໄທເຈົ້າ
ນິກຍໍທົນທານສູ້　　ຣິທທີມາຣກົ້ນຽມຊົວຊີວັງແລ້ວ
ເປັນດັ່ງຂ້າຂ່າວໃຫ້　　ເຫັນແຈ້ງສູ່ປຼະກາຣ ນີ້ແລ້ວ

- ບົດຂອງ ສັມພາທີເຈຣຈາກັບຫະນຸມານ :

ແຕ່ນັ້ນ ສັມພາທີວິຫົກທ້າວ　　ຮູ້ຂ່າວຄະດີສານ
ໂດຽທີ່ຟັງອາການ　　ແຫ່ງຊຸມກະບີ້ທາວ
ໂອນໍ ອັນວ່າພາດານ້ອຍ　　ເນວສກຸນນ້ອງພີ່ເຣົາມາ
ເຣືອງຣິທທີເດຊກ້າ　　ກໍ່ເສັ້ຽພາເຜົ່ານານ ນີ້ນໍ
ບັດນີ້ ເຣົາຫາກແຮງຊຣາພົ້ນ　　ຕົນພີ່ສັມພາທີ ນີ້ມາ
ບໍ່ອາຈພາຣົພົນ　　ໄພ່ເມືອງປຼະຊັນສູ້

........................

ເຮົາຈັກພາເອົາເຈົ້າ ກະບີສີຣິທທິເດຊ
ໄປສັງເກດການໃຫ້ຮູ້ ທົນເບື້ອງບ່ອນຍັກສາ ທ່ານເຮີຍ ໆ

- ເພງເຊີດ - ສົມພາທີພາເອົາທະນຸມານໄປເອີ້ນເບິ່ງລັງກາແລ້ວກັບມາຫາພູ່ອານອນ ປຸດພາກ-
- ບົດຂອງທະນຸມານຕໍ່ ຮອງປະກາສເຕົ່າຝູງອານອນ :

ແຕ້ມ ສີທະນຸມານທ້າວ ປະກາສແກ່ກະບີໄພ
ໃຫ້ຄອຍທຳພຽມເພັງ ພ່ຳກັນໃຫ້ແຂງເຂັ້ມ
ໃຫ້ລູກມານອນພ້ອມ ພລັນເບືອງທຽວເທສ
ໄປສັງເກດການໃຫ້ຮູ້ ເຫັນເບື້ອງບ່ອນປະສົງ ກ່ອນເທີ້ນ ໆ

- ເພງກົມ - ທະນຸມານກວດກອງທັບຂື້ງພູ່ລີງໄດ້ພ້ອມກັນລຸກນັ້ງແລ້ວຟັງຄຳແຖລງຂອງທະນຸມານ.
- ເພງເຊີດ - ບໍຣິວາຣລີງ ໄດ້ອອກໄປ ./-

---------------

# F R A G M E N T   D U   R A M A N Y A N A

—+++oo0Ooo+++—

## LE RAPT DE SITA

-:-:-:-:-

RAVANA ayant entendu parlé de la beauté incomparable de SITA et des vertus d'épouse de cette Princesse est enflammé d'amour .

Aucune loi naturelle, aucun obstacle humain ne peut arrêter sa décision de ravir SITA à son époux .

Ne voulant pas combattre de front RAMA, le vaillant guerrier,il a recours à la ruse .

Dans la forêt profonde où vivent en exil RAMA, SITA, son épouse et LAKCHMANA, errait un yaksa nommé MARICA .

RAVANA propose à MARICA un marché :
En échange de la moitié du Royaume de RAVANA, MARICA doit se transformer en ravissante gazelle d'or et venir tenter les désirs de SITA .

Malgré les objurgations de MARICA et les funestes présages sur son destin futur s'il commettait la mauvaise action d'enlever une épouse fidèle à un homme vertueux, RAVANA, aveuglé par la passion, poursuit son coupable dessein .

Au bord d'un ruisseau SITA cueille les baies sauvages. Une gazelle d'or sort des broussailles et captive ses yeux et son coeur .

SITA veut avoir la gazelle comme compagne de sa solitude .

Elle engage par des paroles enthousiastes RAMA et LAKCHMANA à partir à la recherche etàla capture de la gazelle .

Pendant l'absence des Héros un Ermite parait devant elle et lui dit :
" O femme rayonnante de beauté - merveille de l'univers - es-
" tu Lakchmi ? Es-tu une Apsara ? - Qui es-tu ? -

SITA écoute comme on doit écouter un Brahmane .

Elle lui dit :
" J'attends RAMA, mon valeureux époux et mon frère
" LAKCHMANA - ils ne vont pas tarder à venir - ils tuent
" les cerfs et les sangliers .
" Assieds-toi .
" Saint Homme, voici l'eau pour laver tes pieds, voi-
" ci les fruits que je t'offre avec bohheur ..... et
" toi qui es-tu ? "

Brusquement transformé il répond :
" Je suis RAVANA, Roi des Rakchasas .
" Viens, Je vais t'emporter . Tu seras mon épouse, ma
" Reine à Lanka . "

SITA regarde vers la forêt profonde. Elle tremble comme un roseau dans la tempête. Elle lance de parçants appels . Elle chancelle sous le poids de l'épouvante .

RAMA l'emporte dans ses bras démesurés .

Tout à coup, ils sont environnés par une grande ombre .
Au dessus d'eux plane le vautour JATAYOUS.
" O JATAYOUS, aie pitié de Moi . Vas dire à mon époux que
" RAVANA m'emporte .

L'oiseau sacré de VICHNOU veut la sauver, mais il succombe sous le coup de RAVANA - il tombe les ailes coupées, le corp transpercé .

Alors Elle laisse tomber les anneaux des ses chevilles, ses bracelets, ses colliers, son voile, espérant que les Génies des bois les remettraient entre les mains de RAMA .

Et ses cris se perdent dans l'immensité de l'espace .

## A LA RECHERCHE DE SITA

—++oo++—

Partis à la recherche de Sita, enlevée par RAVANA, chacun dans une direction différente, CATABALI, VINATA et SOUCHENA étaient revenus auprès de RAMA, sans avoir retrouvé la trace du Ravisseur et de sa victime .

HANOUMAT et ses vaillants guerriers endurant la souffrance et la faim, n'avaient perdu ni le courage, ni la foi dans le succès .

Ils continuent leur recherche .

Cependant après bien des jours de marche dans la forêt immense, après des combats victorieux contre les monstres terribles, ils arrivent au bord de la mer .

Cette immensité fait sombrer leur espérance : leurs forces sont épuisées . Ils s'allongent sur la grève , s'apprêtent à mourir de faim, de fatigue sous l'ardeur implacable du soleil .

HANOUMAT le vaillant guerrier veut mourir debout .

Soudain du haut du ciel, un grand oiseau de proie les couvre de son ombre .
Il va s'abattre sur eux pour se repaitre .

Les singes entendent les paroles de l'oiseau :
" Un grand festin pour moi . Ils sont maigres, décharnés,
" mais je vais me régaler de leurs yeux et de leurs cer -
" velles ", -

et ils ferment leurs yeux attendant la fin .

HANOUMAT dit :
" Nous sommes perdus . Yama nous a envoyé SAMPATI pour nous
" punir d'avoir échoué dans nos recherches . Cependant
" pouvions-nous réussir puisque JATAYOUS lui-même a
" succombé sous les coups de RAVANA ."

" Comment JATAYOUS est mort,"cria SAMPATI . Il s'approcha d'HANOUMAT pour le questionner .

HANOUMAT lui fit le récit du combat et de la défaite de JATAYOUS .

" Hélas ! Hélas ! gémit le grand vautour , mon frère
" JATAYOUS était jeune , et moi je suis vieux, je ne puis
" attaquer , avec vous , RAVANA , mais je vais vous dire où
" habite RAVANA et où il a caché SITA . "

Alors , sous l'exhortation d'HANOUMAT , les singes domptant leurs faiblesses se relèvent . Ils avaient retrouvé leur vaillance , prêts à subir d'autres épreuves , d'autres combats pour retrouver la belle SITA .

—++ooOoo++—

= : FIN : =

## ຣະບຽບ ແລະ ບົດຮ້ອງລຳໂຄມ

----0----

໑/- ໄຕ້ໂຄມຍ່າງສອງແຖວເຂົ້າມາ ເຖິງທີ່ຕັ້ງແຖວຄຸເຄົ່າຕີໄມ້ກັບ ມີ ສຽງລຸກຢືນພ້ອມກັນ, ອີກ ມີ ສຽງ ກົ້ມຫົວຄຳນັບ, ອີກ ໑ ສຽງເງີຍຫົວຂຶ້ນ, ອີກ ມີ ສຽງສອງແຖວຫັນໜ້າເຂົ້າຫາກັນ, ອີກ ມີ ສຽງ ຫັນຫລັງອອກຢືນທີ່ເກົ່າ, ແລະ ອີກ ມີ ສຽງຮ້ອງພ້ອມເພງເທາະວ່າ :

ປາງໄທ້ ເທວະຣາດ — ອັນມີ ອຳນາດ ເຮືອງເດຊາ

ທັງເທບ ພະເທວາ — ທົກທ້ອງຟ້າເວຫາ ຫົນ

ຫຼິງທິບ ຈັກສຸເຫັນ — ກິດທີ່ເປັນ ການມິ່ງຄົນ

ຕ່າງພູະ ນິກະນົນ — ຈະປ່ຽນປັ້ນ ລົງວິມງານ

ແລກັນ ທຸກອັ້ນອ່ອງ — ອອກຈາກຫ້ອງ ເໝວິມານ

ຕ່າງເທາະ ເດີນທະຍານ — ຕາມອາການ ຂອງເທວາ

ທອດກອນ ແລະ ອອນກາຍ — ທຳເບື້ອງຊ້າຍ ແລະ ຍ້າງຂວາ

ເທາະຕາມ ລາມກັນມາ — ຈາກແດນຟ້າ ຟ້າກສວັນ

ເຖິງທີ່ ໂຣງພິທີ — ຕ່າງຍິນດີ ດວງການງັນ

ເລື່ອນລງ ຢູ່ພ້ອມກັນ — ໃນທີ່ນັ້ນ ອັ້ນເບື້ອງບົນ

ຕ່າງທອດ ທີ່ບພະເນດ — ເລັ່ງສັງເກດ ດູເຫດຜົນ

ເຫັນທົ່ວ ຂອບມົນທົນ — ການມິ່ງຄົນ ອັນສົມຄວນ.

໑/- ໃນເພງພຍາເດີນເຕັ້ນຍ່າງອອກໄປແຕ່ລະຟາກ ສຸດແຖວກັບເຂົ້າເຖິງຕົ້ນແຖວ ຕີໄມ້ກັບ ມີ ປ້ອງໜ້າຢຸດ :

໔/- ເຂົ້າມາຢືນແຖວ ຕີໄມ້ກັບ ຮ້ອງນາງນາກພ້ອມກັນວ່າ :

ບັນດາ ຂ້າບາດ ບຸນນອນ — ອື່ງພ້ອມກັນຊວນ

ບັງຄົມ ອົງເອີນ ສາທຍນ

ຄຳນັບ ນ້ອບນ້ອມ ຂໍພອນ — ແຕ່ງສິ່ງ ບໍ່ວອນ

ອື່ງເປັນ ປະທານ ໂລກາ

ຈົງຊ່ວງ ອະພິບານ ຣັກສາ — ຈອມພົບ ລາວຣັດຖາ

ຢູ່ເກົ້າ ແຫ່ງເຮົາ ທັງຫຼາງ

ໃຫ້ພະອົງ ພົ້ນໄພ ຍັນຕຣາງ — ກະເສມສຸກ ສບາງ

ສຳຣານ ນິຣາ ໄຊສວັນ

ນະຣີໂລກ ນະຣີທຸກ ຮູບພັນ    ແຈ່ມພຽງ ດວງຈັນ
ຢ່າເກີດ ອຸບາດ ບຽນບອນ .

ນີ/- ເພງເອີດ ເຕັ້ນອອກໄປແລ້ວ ຍ່າງສລັບແຖວແລະຍ່າງວຽນກວດກົ້ນທຽ ຕີໄມ້ກັບ ນີ ສຽງ
ທັ້ນໜາກັບນາງຄືນ ຍ່າງມາເຖິງຕົ້ນແຖວ ຮ້ອງລົມພັດຊາຍເຂົາ ພ້ອມກັນວ່າ :

ບັນດາເທວາ ໃນແຫ່ງຫ້ອງຟ້າ    ລົງມາຊົມງານ ມີຈິດຊື່ນຊົມ
ອາຣົມສຳລານ ຕ່າງຟ້ອນຂັບຂານ    ສລອງການທີ່ນີ້
ເປັນໝູ່ຄູ່ຄຽງ ທອດກອນອ່ອນອຽງ    ແອ່ນເອນເຜັ່ນສີ ເຢື້ອງຊ້າຍຍ້າຍຂວາ
ທຳທ່າທີ່ດີ ຖືໂຄມອັກຄີ ຢູ່ທີ່ຫັດຖາ
ຮ່າງຮຳທຳນອງ ເຕັ້ນທ່າເຢາະຢ່ອງ ແຄ້ວຄ່ອງທຸກທ່າ ຊູຫັດຂຶ້ນລົງ
ຍໍອົງຊົງຄາ ຮຳຮ່າງໄປມາ ກັບໜ້າຫາກັນ
ແລ້ວປ່ຽນວຽນວົງ ຄົບທ່າຟ້ອນລົງ    ທຸກອົງຣີທັນ ຕາມສບາຍທາງທຸກ
ແສນສນຸກມາກຄົມ ພາກັນຂຶ້ນສວັນ    ຊ່ອງຊັ້ນແຫ່ງຕົນ .

ເພງເອີດ ..............

( ຈົບ )